**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ ເລກທີ 1170/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28 ພະຈິກ 2023

# ຂໍ້ຕົກລົງ
# ວ່າດ້ວຍວົງເງິນປົກປ້ອງ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017;
- ອີງຕາມ ໜັງສືສະເໜີຂອງສຳນັກງານປົກປ້ອງເງິນຝາກ ສະບັບເລກທີ 290/ສປງ, ລົງວັນທີ 31 ຕຸລາ 2023.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 11 ຂອງດຳລັດວ່າດ້ວຍການປົກປ້ອງເງິນຝາກສະບັບເລກທີ 329/ລບ, ລົງວັນທີ 25 ຕຸລາ 2017 ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ ແລະ ສາມາດຈັດຕັ້ງປະຕິບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ປົກປ້ອງຜູ້ຝາກເງິນ ແລະ ສ້າງຄວາມເຊື່ອໝັ້ນ ໃຫ້ສັງຄົມ ຕໍ່ລະບົບສະຖາບັນການເງິນ ຢູ່ ສປປ ລາວ.

**ມາດຕາ 2 ວົງເງິນປົກປ້ອງ**

ວົງເງິນປົກປ້ອງ ແມ່ນວົງເງິນສູງສຸດ ຈຳນວນ ໜຶ່ງຮ້ອຍລ້ານ (100.000.000) ກີບ ຕໍ່ ຜູ້ຝາກເງິນໜຶ່ງລາຍ ຕໍ່ ສະມາຊິກໜຶ່ງແຫ່ງ ທີ່ສຳນັກງານປົກປ້ອງເງິນຝາກ ຈ່າຍໃຫ້ຜູ້ຝາກເງິນ ທີ່ຝາກໄວ້ນຳສະມາຊິກໃດໜຶ່ງ ຂອງສຳນັກງານປົກປ້ອງເງິນຝາກ ພາຍຫຼັງທີ່ໄດ້ຮັບໜັງສືທາງລັດຖະການຈາກ ທະນາຄານແຫ່ງ ສປປ ລາວ ໃຫ້ດຳເນີນການຈ່າຍເງິນປົກປ້ອງ.

ເງິນປົກປ້ອງ ຕ້ອງຈ່າຍເປັນສະກຸນເງິນກີບ, ສຳລັບເງິນຝາກເປັນເງິນຕາຕ່າງປະເທດໃຫ້ຄິດໄລ່ ຕາມອັດຕາແລກປ່ຽນ (ອັດຕາຊື້) ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນວັນສຸດທ້າຍ ຂອງການດຳເນີນທຸລະກິດ ຂອງສະມາຊິກ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ສຳນັກງານປົກປ້ອງເງິນຝາກ, ສະມາຊິກ ຂອງສຳນັກງານປົກປ້ອງເງິນຝາກ, ຜູ້ຝາກເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍວົງເງິນປົກປ້ອງ ສະບັບເລກທີ 1197/ທຫລ, ລົງວັນທີ 31 ທັນວາ 2019.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

**ບຸນເຫຼືອ ສິນໄຊວໍລະວົງ**